## ຄວາມເປັນມາ (Background)

ຂະບວນການໂຕະມົນ (RTP) ແມ່ນກົນໄກທີ່ສຳຄັນສຳລັບສປປ ລາວ ນຳໃຊ້ເພື່ອປະສານງານສ້າງຄວາມເຂົ້າໃຈກັບບັນດາຄູ່ຮ່ວມພັດທະນາກ່ຽວກັບວຽກງານການພັດທະນາປະເທດຊາດ. ກອງປະຊຸມໂຕະມົນ (RTIM) ທີ່ຈັດຂຶ້ນທຸກໆປີ, ແມ່ນແນໃສ່ສັງລວມເອົາບັນດາໝາກຜົນ,ຄວາມຄືບໜ້າ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດວຽກງານການພັດທະນາ, ປຶກສາຫາລືບູລິມະສິດສຳລັບປີທີ່ຈະມາເຖິງ ແລະ ໃຫ້ການຊີ້ນຳດ້ານຍຸດທະສາດ/ນະໂຍບາຍ ແລະ ຂໍ້ສະເໜີແນະກ່ຽວກັບບູລິມະສິດການພັດທະນາ ແລະການປະສານງານ. ກອງປະຊຸມໂຕະມົນປະຈຳປີ 2023 ຄາດວ່າຈະຈັດຂຶ້ນໃນວັນທີ 13 ກຸມພາ 2024, ຊຶ່ງກອງປະຊຸມປະທານ ແລະ ປະທານຮ່ວມໜ່ວຍງານຂະແໜງການທີ່ຈະຈັດຂຶ້ນໃນວັນທີ 16 ມັງກອນ 2024 ຈະເປັນການກະກຽມຄວາມພ້ອມສຳລັບກອງປະຊຸມໂຕະມົນປະຈຳປີ.

ກອງປະຊຸມປະທານ ແລະ ປະທານຮ່ວມໜ່ວຍງານຂະແໜງການ ເພື່ອກະກຽມຄວາມພ້ອມສຳລັບກອງປະຊຸມໂຕະມົນ ຈະປະກອບມີວາລະສຳລັບການປຶກສາຫາລືໝາກຜົນ ແລະ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດຜົນກອງປະຊຸມໂຕະມົນປະຈຳປີ 2022, ພ້ອມທັງປຶກສາຫາລືກ່ຽວກັບຫົວຂໍ້ສຳລັບກອງປະຊຸມໂຕະມົນປະຈຳປີ 2023 ທີ່ຈະມາເຖິງ. ນອກຈາກນັ້ນ, ກອງປະຊຸມຍັງຈະໄດ້ນຳສະເໜີຮ່າງປຶດແນະນຳຂະບວນການໂຕະມົນ, ເຊິ່ງມີຈຸດປະສົງເພື່ອເປັນເອກະສານອ້າງອີງສຳລັບການເຮັດວຽກຂອງໜ່ວຍງານຂະແໜງການ ແລະ ກອງເລຂາໃນຕໍ່ໜ້າ. ຮ່າງປຶດແນະນຳດັ່ງກ່າວຈະນຳສົ່ງໃຫ້ກັບຜູ້ເຂົ້າຮ່ວມກ່ອນກອງປະຊຸມເພື່ອໃຫ້ມີການທົບທວນຄືນ ແລະ ປະກອບຄຳເຫັນໃນລະຫວ່າງກອງປະຊຸມໄດ້ຢ່າງມີປະສິດທິພາບ. ປຶດແນະນຳດັ່ງກ່າວຄາດວ່າຈະໄດ້ຮັບການສະຫຼຸບ ແລະ ຮັບຮອງໃນກອງປະຊຸມໂຕະມົນປະຈຳປີ.

The Round Table Process (RTP) is the primary mechanism used by the Government of Lao PDR to coordinate development efforts with its partners. The Round Table Implementation Meeting (RTIM), held annually, takes stock of progress and challenges, discusses priorities for the coming year and provides strategic orientations and recommendations on both development priorities and coordination. The upcoming RTIM, scheduled for 13th February, will be preceded by a retreat of the chairs and co-chairs of the Sector Working on 16th January 2024.

The Sector Working Group chair and co-chair retreat will provide a platform for participants to discuss the progress made in implementing the recommendations from the 2022 RTIM, as well as to deliberate on the themes for the upcoming RTIM 2023. Additionally, the event will introduce the draft Round Table Process guideline, which is intended to serve as a key reference for the workings of the Sector Working Groups and the RTP secretariat in the coming years. The draft guideline will be shared with participants ahead of the retreat to allow for review and productive discussions during the event, with expectation to finalize it by the RTIM in February.

**ວາລະກອງປະຊຸມ**

**AGENDA**

# ກອງປະຊຸມປຶກສາຫາລືກ່ຽວກັບການກະກຽມກອງປະຊຸມໂຕະມົນປະຈຳປີ 2023 ແລະ ກອງປະຊຸມປະທານ-ປະທານຮ່ວມຂອງໜ່ວຍງານຂະແໜງການ

**RTP Retreat/SWG Chair and Co-Chair meeting for preparation of the 2023 Round Table Meeting (RTIM 2023)**

**ທີ່ນະຄອນຫຼວງວຽງຈັນ, ວັນທີ 16 ມັງກອນ 2024**

**Vientiane Capital, January 16, 2024**

| | |
|---|---|
| 08:30 – 09:00 | **ລົງທະບຽນ**<br>**Registration** |
| 09:00 – 09:10 | **ກ່າວເປີດກອງປະຊຸມ**<br>**Opening remarks**<br>*ທ່ານ ນາງ ພອນວັນ ອຸທະວົງ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.*<br>*H.E. Mme. Phonevanh Outhavong, Vice Minister of Planning and Investment.* |
| 09:10- 09:20 | **ກ່າວມີຄຳເຫັນ**<br>**Remarks**<br>*ທ່ານ ບັກໂດເດັຍ ເບີຄະນ໋ອຟ, ຜູ້ປະສານງານອົງການ ສປຊ ປະຈຳ ສປປ ລາວ.*<br>*Mr. Bakhodir Burkhanov, the UN Resident Coordinator in Lao PDR.* |
| 09:20 – 09:35 | **ລາຍງານການຈັດຕັ້ງປະຕິບັດແຈ້ງການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນປີ 2022**<br>**Presentation on the follow up on Implementation of the recommendations of the RTIM 2022**<br>*ທ່ານ ນາງ ສີສົມບູນ ອຸນາວົງ, ຫົວໜ້າກົມຮ່ວມມືສາກົນ.*<br>*By Mme. Sisomboun Ounavong, Director General, Department of International Cooperation.* |
| 09:35 – 10:05 | **ປຶກສາຫາລື**<br>**Discussion** |
| 10:05 – 10:25 | **ຖ່າຍຮູບລວມ/ພັກຜ່ອນດື່ມຊາ-ກາເຟ**<br>**Group Photo/Coffee Break** |
| 10:25 – 10:40 | **ລາຍງານຮ່າງແນວຄວາມຄິດກ່ຽວກັບກອງປະຊຸມໂຕະມົນປະຈຳປີ 2023**<br>**Presentation on the draft Concept Note for the 2023 Round Table Implementation Meeting** |

*ທ່ານ ສີສົມພອນ ເພັດດາວເຮືອງ, ຮອງຫົວໜ້າກົມຮ່ວມມືສາກົນ.*

*By Mr. Sysomphorn Phetdaoheuang, Deputy Director General, Department of International Cooperation.*

**10:40 – 11:10**

**ປຶກສາຫາລື**

**Discussion**

**11:10 – 11:25**

**ລາຍງານຮ່າງບົດແນະນຳກ່ຽວກັບກົນໄກຂອງຂະບວນການໂຕະມົນ**

**Presentation of the draft guideline of the RTP mechanism**

*ທ່ານ ສັນຕິ ຊົງນາວົງ, ຮັກສາການຫົວໜ້າພະແນກອົງການຈັດຕັ້ງສາກົນ,ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.*

*By Mr. Santi Songnavong, Acting Director of Division of International Organization, Department of International Cooperation.*

**11:25 – 11:40**

**ປຶກສາຫາລື**

**Discussion**

**11:40 – 11:50**

**ກ່າວມີຄຳເຫັນ**

**Remarks**

*ທ່ານ ບັກໂຄເດັຍ ເບີຄະນ໋ອຟ, ຜູ້ປະສານງານອົງການ ສປຊ ປະຈຳ ສປປ ລາວ.*

*Mr. Bakhodir Burkhanov, the UN Resident Coordinator in Lao PDR*

**11:50 – 12:00**

**ກ່າວປິດກອງປະຊຸມ**

**Closing Remarks**

*ທ່ານນາງ ພອນວັນ ອຸທະວົງ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ.*

*H.E. Mme. Phonevanh Outhavong, Vice Minister of Planning and Investment.*

**12:00-13.00**

**ພັກອາຫານທ່ຽງ**

**Lunch**